ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 2397 /ອປຊ

ນະຄອນຫຼວງວຽງຈັນ, ວັນທີ 14 JUL 2022

# ແຈ້ງການ

ເຖິງ: ບັນດາ ຫົວໜ່ວຍແຮງງານ, ຜູ້ປະກັນຕົນໃນພາກວິສາຫະກິດ ແລະ ຜູ້ສະໝັກໃຈ.

ເລື່ອງ: ການຢຸດຕິຈ່າຍອຸດໜູນປ່ວຍການ ສໍາລັບຜູ້ຕິດເຊື້ອພະຍາດໂຄວິດ-19 ທີ່ມີອາການເບົາບາງ ແລະ ໄດ້ພັກປິ່ນປົວຢູ່ເຮືອນ.

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ), ເລກທີ 54/ສພ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປະກັນສັງຄົມແຫ່ງຊາດ, ສະບັບເລກທີ 0897/ຣສສ, ລົງວັນທີ 08 ມີນາ 2022;
- ອີງຕາມ ແຈ້ງການ ທິດຊີ້ນໍາກ່ຽວກັບມາດຕະການໃນການເຂົ້າ-ອອກ ສປປ ລາວ ແລະ ມາດຕະການຜ່ອນຜັນໃນປະເທດ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19, ສະບັບເລກທີ 627/ຫສນຍ, ລົງວັນທີ 07 ພຶດສະພາ 2022;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຢຸດຕິການໃຫ້ອຸດໜູນປ່ວຍການ ສໍາລັບຜູ້ທີ່ມີອາການເບົາບາງ ແລະ ໄດ້ຮັບອານຸຍາດໃຫ້ພັກປິ່ນປົວຢູ່ເຮືອນ, ສະບັບເລກທີ 2751/ຣສສ, ລົງວັນທີ 13 ກໍລະກົດ 2022.

ອົງການປະກັນສັງຄົມແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາ ຫົວໜ່ວຍແຮງງານ, ຜູ້ປະກັນຕົນໃນພາກວິສາຫະກິດ ແລະ ຜູ້ສະໝັກໃຈ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ປະຕິບັດ ກ່ຽວກັບນະໂຍບາຍອຸດໜູນປ່ວຍການຕໍ່ຜູ້ທີ່ຕິດເຊື້ອພະຍາດໂຄວິດ-19 ດັ່ງນີ້:

1. ກໍລະນີ ຜູ້ທີ່ຕິດເຊື້ອພະຍາດໂຄວິດ-19 ທີ່ມີອາການເບົາບາງ ທີ່ໄດ້ປິ່ນປົວຢູ່ເຮືອນ ໂດຍບໍ່ໄດ້ຜ່ານການກວດ, ປິ່ນປົວ ແລະ ບໍ່ມີການຢັ້ງຢືນຈາກໂຮງໝໍ ນັບແຕ່ວັນທີ 01 ກໍລະກົດ 2022 ເປັນຕົ້ນໄປ ແມ່ນຈະໄດ້ຢຸດຕິການໃຫ້ອຸດໜູນປ່ວຍການ;
2. ກໍລະນີ ຜູ້ຕິດເຊື້ອພະຍາດໂຄວິດ-19 ທີ່ໄດ້ຜ່ານການກວດ ແລະ ປິ່ນປົວຈາກລະບົບຂອງໂຮງໝໍ ພ້ອມທັງໄດ້ຮັບການຢັ້ງຢືນຈາກໂຮງໝໍດັ່ງກ່າວ ແມ່ນຍັງສືບຕໍ່ໃຫ້ການອຸດໜູນປ່ວຍການ ຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ.

ສໍາລັບຜູ້ທີ່ມີຈຸດປະສົງຂໍອຸດໜູນຈາກປະກັນສັງຄົມ ແມ່ນໃຫ້ເອົາໃຈໃສ່ປະກອບເອກະສານຢັ້ງຢືນຕ່າງໆໃຫ້ຄົບຖ້ວນ ແລະ ດໍາເນີນການຍື່ນເອກະສານຮ້ອງຂໍເຖິງ ອົງການປະກັນສັງຄົມແຫ່ງຊາດ ຫຼື ຫ້ອງການປະກັນສັງຄົມແຂວງ ຕາມໄລຍະເວລາຂອງແຕ່ລະປະເພດການອຸດໜູນທີ່ໄດ້ກໍານົດໄວ້, ເພື່ອຫລີກລ້ຽງການເສຍສິດໃນການຮັບອຸດໜູນປະເພດຕ່າງໆ.

ດັ່ງນັ້ນ, ຈຶ່ງຂໍແຈ້ງການມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ.

ເຊັນແທນ ຫົວໜ້າອົງການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອົງການປະກັນສັງຄົມແຫ່ງຊາດ

ບົວທອນ ພົມມະຈັນ